ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 001/ປທລ/2026

ນະຄອນຫຼວງວຽງຈັນ, ວັນທີ: 25 ກຸມພາ 2026

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2026

- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບ ມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2026 ໃນວັນທີ 25 ກຸມພາ 2026 ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາ ມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ປທລ ຄັ້ງທີ 3/2025 ເມື່ອວັນທີ 06 ຕຸລາ 2025;
2. ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
4. ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ("PWC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2026 ບໍ່ເກີນ 37,000 ໂດລາສະຫະລັດ; ໃຫ້ນຳສະເໜີໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
5. ຮັບຮອງເອົາ ການປັບປຸງອັດຕາເບ້ຍລ້ຽງກອງປະຊຸມສະພາບໍລິຫານຂອງ ສະມາຊິກສະພາບໍລິຫານ, ຊຶ່ງໄດ້ອັດຕາ ເບ້ຍລ້ຽງດັ່ງກ່າວ ແມ່ນບໍ່ໄດ້ຖືກປັບປຸງຕັ້ງແຕ່ ປີ 2015 ແລະ ເພື່ອໃຫ້ສອດຄ່ອງກັບສະພາບໃນປັດຈຸບັນ ຈຶ່ງໄດ້ມີ ການປັບປຸງ, ຕາມລາຍລະອຽດການປັບປຸງ ດັ່ງລຸ່ມນີ້:

ຕຳແໜ່ງ	ອັດຕາເກົ່າ	ອັດຕາໃໝ່
ປະທານສະພາບໍລິຫານ	1,500,000 ກີບຕໍ່ຄັ້ງ	5,000,000 ກີບຕໍ່ຄັ້ງ
ຮອງປະທານສະພາບໍລິຫານ	1,000,000 ກີບຕໍ່ຄັ້ງ	4,000,000 ກີບຕໍ່ຄັ້ງ
ສະມາຊິກສະພາບໍລິຫານ/ຄະນະຜູ້ອຳນວຍການ	500,000 ກີບຕໍ່ຄັ້ງ	3,000,000 ກີບຕໍ່ຄັ້ງ
ເລຂານຸການບໍລິສັດ	-	2,000,000 ກີບຕໍ່ຄັ້ງ

6. ກຳນົດເອົາວັນທີ 16 ມີນາ 2026 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025;
7. ກຳນົດວັນທີເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 28 ເມສາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ;
8. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ມີລາຍລະອຽດດັ່ງນີ້:

ວາລະທີ 1: *ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024;*

ວາລະທີ 2: *ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນ ທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2025;*

ວາລະທີ 3: *ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2025 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນຊຸມປີຜ່ານມາ;*

ວາລະທີ 4: *ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026;*

ວາລະທີ 5: *ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouse Coopers (Lao) Sole Co., Ltd. ("PWC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2026 ບໍ່ເກີນ 37,000 ໂດລາສະຫະລັດ;*

ວາລະທີ 6: *ພິຈາລະນາ ແລະ ຮັບຮອງ ການປັບປຸງອັດຕາເບ້ຍລ້ຽງກອງປະຊຸມສະພາບໍລິຫານຂອງ ສະມາຊິກສະພາບໍລິຫານ*

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ ອີດສະລະ

ບໍລິສັດ ປິໂຕລຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company

ທ່ານ ສິລາ ວຽງແກ້ວ